**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງການຕ່າງປະເທດ

ຫ້ອງການ

ເລກທີ: 399 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 05 FEB 2026

# ຫນັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບການສະໜອງ ການບໍລິການບໍາລຸງຮັກສາ ລະບົບແອເຢັນ.

**ເລື່ອງ:** ເຊີນເຂົ້າຮ່ວມແຂ່ງຂັນປະມູນເປີດກວ້າງ ສໍາລັບການສະໜອງ ການບໍລິການບໍາລຸງຮັກສາລະບົບ ແອເຢັນ ໃຫ້ແກ່ ກະຊວງການຕ່າງປະເທດ ປະຈໍາປີ 2026.

ຫ້ອງການ ກະຊວງການຕ່າງປະເທດ ຂໍຖືເປັນກຽດຮຽນເຊີນບັນດາບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບການສະໜອງການບໍລິການບໍາລຸງຮັກສາລະບົບແອເຢັນ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນ ເພື່ອສະໜອງການບໍລິການ ບໍາລຸງຮັກສາລະບົບແອເຢັນ ໃຫ້ແກ່ ກະຊວງການຕ່າງປະເທດ ປະຈໍາປີ 2026, ເຊິ່ງມີລາຍລະອຽດ ດັ່ງນີ້:

1. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ **30/ສພຊ**, ລົງວັນທີ **2** ພະຈິກ **2017** ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
2. ການປະມູນນີ້ ແມ່ນເປີດກວ້າງໃຫ້ທຸກໆ ບໍລິສັດ, ຫ້າງ/ຮ້ານ ຂອງນິຕິບຸກຄົນພາຍໃນທີ່ດໍາເນີນທຸລະກິດຢູ່ໃນນະຄອນຫຼວງວຽງຈັນ, ມີໃບທະບຽນວິສາຫະກິດ, ມີເລກປະຈໍາຕົວເສຍອາກອນ ແລະ ມີໃບຢັ້ງຢືນການປະຕິບັດພັນທະພາສີອາກອນ ຖືກຕ້ອງຕາມກົດໝາຍ.
3. ບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບການສະໜອງ ການບໍລິການບໍາລຸງຮັກສາລະບົບແອເຢັນ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອົາເອກະສານປະມູນຄົບຊຸດໄດ້ ທີ່ ພະແນກບໍລິຫານ, ຫ້ອງການ ກະຊວງການຕ່າງປະເທດ (ໂທລະສັບ 021 416572, 020 55611534), ເຊິ່ງມີສໍານັກງານຕັ້ງຢູ່ຖະໜົນ 23 ສິງຫາ, ບ້ານໂພນໄຊ, ເມືອງໄຊເຊດຖາ, ນະຄອນຫຼວງວຽງຈັນ ໃນໂມງລັດຖະການ 8:00-11:00 ໂມງ ແລະ 13:00-16:00 ໂມງ, ເລີ່ມຂາຍຊອງປະມູນ ວັນທີ 11 ກຸມພາ 2026, ລາຄາຊອງປະມູນ 1,000,000 ກີບ (ໜຶ່ງລ້ານກີບ), ຈໍານວນເງິນດັ່ງກ່າວຈະບໍ່ໄດ້ສົ່ງຄືນ, ວິທີການຊໍາລະເງິນຕ້ອງຈ່າຍເປັນເງິນສົດ.

4. ກຳນົດສົ່ງຊອງປະມູນ ຕ້ອງໃຫ້ສົ່ງ ພະແນກບໍລິຫານ, ຫ້ອງການ ກະຊວງການຕ່າງປະເທດ ກ່ອນເວລາ 16:00 ໂມງ ຂອງວັນທີ 24 ກຸມພາ 2026, ຖ້າຊອງປະມູນໃດສົ່ງຊ້າກ່ອນກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງປະມູນ.
5. ກຳນົດເປີດຊອງປະມູນແມ່ນວັນທີ 25 ກຸມພາ 2026 ເວລາ 13:00 ໂມງ ທີ່ ຫ້ອງປະຊຸມຊັ້ນ 3 ຕຶກ B ຂອງກະຊວງການຕ່າງປະເທດ, ໂດຍຊ້ອງຫນ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.
6. ເອກະສານປະມູນ ຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫລື ຫນັງສືຄ້ຳປະກັນການປະມູນຈາກທະນາຄານ, ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ.

ດັ່ງນັ້ນ, ຈຶ່ງຮຽນເຊີນມາຍັງທ່ານຜູ້ທີ່ມີຄວາມສົນໃຈ ເຂົ້າຮ່ວມປະມູນ ຕາມວັນເວລາດັ່ງກ່າວດ້ວຍ.

**ຫົວໜ້າຫ້ອງການ**

ກະຊວງການຕ່າງປະເທດ
ຫ້ອງການ

ບໍວອນທັດ ດວງຈັກ

## ເງື່ອນໄຂບໍລິສັດ ຫຼື ຫ້າງ/ຮ້ານ ທີ່ມີສິດເຂົ້າຊື້ຊອງປະມູນ

(1) ໃບທະບຽນວິສາຫະກິດທີ່ຖືກຕ້ອງຕາມກົດໝາຍແຫ່ງ ສປປ ລາວ.
(2) ໃບອະນຸຍາດດໍາເນີນທຸລະກິດດ້ານການສະໜອງການບໍລິການບໍາລຸງຮັກສາແອເຢັນ ຫຼື ທຸລະກິດຂະແໜງການກ່ຽວຂ້ອງ ປະຈໍາປີ 2025 ຫຼື 2026.
(3) ໃບຢັ້ງຢືນເສຍພັນທະອາກອນ ປີ 2024 ຫຼື 2025 (ສະບັບຫຼ້າສຸດ).
(4) ໃບຢັ້ງຢືນຖານະການເງິນຂອງບໍລິສັດ ສະບັບຫຼ້າສຸດ ຈາກທະນາຄານທີ່ໜ້າເຊື່ອຖື.
(5) ໃບຢັ້ງຢືນຜົນງານທີ່ກ່ຽວຂ້ອງຜ່ານມາ (ປະສົບການການຮ່ວມງານກັບພາກລັດ).
(6) ຮູບພາບສະແດງເຄື່ອງໃນຮ້ານ, ສາງເກັບມ້ຽນເຄື່ອງ ແລະ ອຸປະກອນເຄື່ອງມືຮັບໃຊ້ໃນການບໍາລຸງຮັກສາ.
(7) ຮູບສະແດງສະຖານທີ່ຕັ້ງຂອງຮ້ານ, ໂຄງຮ່າງການຈັດຕັ້ງ ແລະ ຈໍານວນພະນັກງານ.